ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ລໍ້ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທະນາຄານແຫ່ງ ສປປ ລາວ ເຂົ້າຢ້ຽມຊົມງານວາງສະແດງ ຮູບພາບ ທີ່ກະຊວງປ້ອງກັນຄວາມສະຫງົບ



ໃນວັນທີ 07 ກັນຍາ 2022 ນີ້ ອີງໃສ່ການເຊື້ອເຊີນຂອງຫ້ອງການກະຊວງປ້ອງກັນຄວາມສະຫງົບ, ຄະນະຈາກ ທຫລ ໄດ້ເຂົ້າຢ້ຽມຊົມງານວາງສະແດງຮູບພາບ ທີ່ຫໍພິພິທະພັນປ້ອງກັນຄວາມສະຫງົບ ເນື່ອງໃນໂອກາດວັນສະເຫຼີມສະຫຼອງ 02 ວັນປະຫວັດສາດ ລາວ-ຫວຽດນາມ.

ຈຸດປະສົງຂອງການເຂົ້າຢ້ຽມຊົມໃນຄັ້ງນີ້, ກໍ່ເພື່ອເປັນການສຶກສາ-ຮຽນຮູ້ຂໍ້ມູນປະຫວັດສາດຄວາມເປັນມາຂອງກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບສາຍພົວພັນລະຫວ່າງ 2 ປະເທດ ແລະ ເພື່ອເປັນການສະເຫຼີມສະຫຼອງປີສາມັກຄີພິເສດ ລາວ-ຫວຽດນາມ ກໍ່ຄື: ວັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ຄົບຮອບ 45 ປີ (18 ກໍລະກົດ 1977-18 ກໍລະກົດ 2022) ແລະ ວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 60 ປີ (05 ກັນຍາ 1962-05 ກັນຍາ 2022).

ຂ່າວ ແລະ ພາບ ໂດຍ: ນ. ທິດສະບາ ທຳມະວົງສິງ

**ໃຊ້ເງິນກີບຄືກຽດສັກສີຂອງຄົນລາວ**